ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------

828

ກະຊວງ ໄປສະນີ,
ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ: ............... /ປທສ.
ນະຄອນຫຼວງວຽງຈັນ, ວັນທີ: ....11 MAR 2015

# ຂໍ້ຕົກລົງ

## ວ່າດ້ວຍ ການໃຫ້ບໍລິການອິນເຕີເນັດກາເຟ

- ອີງຕາມ ກົດໝາຍວ່າດ້ວຍການໂທລະຄົມມະນາຄົມ (ສະບັບປັບປຸງ) ເລກທີ 09/ສພຊ, ລົງວັນທີ 21 ທັນວາ 2011.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

**ລັດຖະມົນຕີວ່າການ ກະຊວງ ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຕິດຕາມ ກວດກາ ແລະ ຄຸ້ມຄອງ ການໃຫ້ບໍລິການອິນເຕີເນັດກາເຟ, ເພື່ອຮັບປະກັນຄຸນນະພາບ ການບໍລິການ ໃຫ້ມີຄວາມວ່ອງໄວ ແລະ ປອດໄພ, ແນໃສ່ສົ່ງເສີມການນຳໃຊ້ອິນເຕີເນັດຢ່າງກ້ວາງຂວາງ ແລະ ທົ່ວເຖິງ, ປະກອບສ່ວນເຂົ້າໃນພາລະກິດ ປົກປັກຮັກສາ ແລະ ພັດທະນາ ປະເທດຊາດ.

**ມາດຕາ 2 ການໃຫ້ບໍລິການອິນເຕີເນັດກາເຟ**

ການໃຫ້ບໍລິການອິນເຕີເນັດກາເຟ ແມ່ນ ການປະກອບການ ສະໜອງບໍລິການເຂົ້າເຖິງອິນເຕີເນັດ ແກ່ຜູ້ຊົມໃຊ້ທົ່ວໄປ ໃນຂອບເຂດ ຮ້ານ ຫຼື ສະຖານທີ່ໃດໜຶ່ງ ທີ່ມີການເຊື່ອມຕໍ່ສັນຍານອິນເຕີເນັດ ຈາກຜູ້ໃຫ້ບໍລິການເຊື່ອມຕໍ່ອິນເຕີເນັດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ອິນເຕີເນັດກາເຟ: ໝາຍເຖິງ ຮ້ານ ຫຼື ສະຖານທີ່ ໃຫ້ບໍລິການອິນເຕີເນັດ ທີ່ມີເຄືອຂ່າຍຄອມພິວເຕີແບບໃຊ້ສາຍ ຫຼື ບໍ່ໃຊ້ສາຍ ເຊື່ອມຕໍ່ອິນເຕີເນັດ ຈາກເຄືອຂ່າຍ ຂອງຜູ້ໃຫ້ບໍລິການເຊື່ອມຕໍ່ອິນເຕີເນັດ;
2. ເຄືອຂ່າຍຄອມພິວເຕີແບບໃຊ້ສາຍ ໝາຍເຖິງ ການເຊື່ອມຕໍ່ລະຫວ່າງອຸປະກອນຄອມພິວເຕີ ຫຼື ອຸປະກອນອີເລັກໂຕຣນິກ ເຂົ້າຫາກັນ ຜ່ານສາຍທອງແດງ ຫຼື ສາຍແກ້ວໃຍແສງ;

3. ເຄືອຂ່າຍຄອມພິວເຕີແບບບໍ່ໃຊ້ສາຍ ໝາຍເຖິງ ການເຊື່ອມຕໍ່ລະຫວ່າງອຸປະກອນຄອມພິວເຕີ ຫຼື ອຸປະກອນອີເລັກໂຕຣນິກ ເຂົ້າຫາກັນ ດ້ວຍຄື້ນຄວາມຖີ່ວິທະຍຸ;
4. ຜູ້ໃຫ້ບໍລິການເຊື່ອມຕໍ່ອິນເຕີເນັດ (Internet Service Provider ຫຼື ISP) ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດ ຖືກຕ້ອງຕາມກົດໝາຍ ເພື່ອສະໜອງບໍລິການເຊື່ອມຕໍ່ສັນຍານອິນເຕີເນັດ ໃຫ້ແກ່ຜູ້ຊົມໃຊ້.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດໃຫ້ບໍລິການອິນເຕີເນັດກາເຟ ຢູ່ ສປປ ລາວ.

## ໝວດທີ 2
## ປະເພດ ແລະ ການອອກອະນຸຍາດໃຫ້ບໍລິການອິນເຕີເນັດກາເຟ

**ມາດຕາ 5 ປະເພດການໃຫ້ບໍລິການອິນເຕີເນັດກາເຟ**

ປະເພດການໃຫ້ບໍລິການອິນເຕີເນັດກາເຟ ມີ 2 ປະເພດດັ່ງນີ້:

1. **ການໃຫ້ບໍລິການອິນເຕີເນັດກາເຟ ປະເພດທີ 1**

   ແມ່ນ ການປະກອບການ ສະໜອງບໍລິການເຂົ້າເຖິງອິນເຕີເນັດສະເພາະເຊັ່ນ ຮ້ານອິນເຕີເນັດ.

2. **ການໃຫ້ບໍລິການອິນເຕີເນັດກາເຟ ປະເພດທີ 2**

   ແມ່ນ ການສະໜອງບໍລິການເຂົ້າເຖິງອິນເຕີເນັດ ໃຫ້ແກ່ຜູ້ມາໃຊ້ບໍລິການທຸລະກິດອື່ນ ຂອງຕົນ ເປັນຕົ້ນ: ຮ້ານກິນດື່ມ, ສະຖານບັນເທີງ, ຮ້ານສັບພະສິນຄ້າ, ພັດທະຄານ, ສະຖານທີ່ພັກເຊົ່າ, ໂຮງແຮມ, ໂຮງໝໍ, ສະຖາບັນການສຶກສາ ແລະ ສະຖານທີ່ສາທາລະນະ ອື່ນໆ.

**ມາດຕາ 6 ການອອກອະນຸຍາດໃຫ້ບໍລິການອິນເຕີເນັດກາເຟ**

ພາຍຫຼັງໄດ້ໃບທະບຽນວິສະຫະກິດແລ້ວ ຕ້ອງຂໍໃບອະນຸຍາດດຳເນີນທຸລະກິດໃຫ້ບໍລິການອິນເຕີເນັດກາເຟ ນຳພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫຼວງ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 7 ການຂໍໃບອະນຸຍາດໃໝ່.**

ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງຂໍໃບອະນຸຍາດ ດຳເນີນທຸລະກິດໃຫ້ບໍລິການອິນເຕີເນັດກາເຟ ຕ້ອງປະກອບເອກະສານດັ່ງນີ້:

1. ໃບຄຳຮ້ອງ
2. ໃບທະບຽນວິສາຫະກິດ
3. ສຳເນົາສຳມະໂນຄົວ ຫຼື ບັດປະຈຳຕົວ 1 ສະບັບ
4. ໃບຢັ້ງຢືນທີ່ຢູ່ຈາກອຳນາດການປົກຄອງບ້ານ 1 ສະບັບ
5. ໃບຢັ້ງຢືນທີ່ຕັ້ງຂອງຮ້ານ 1 ສະບັບ
6. ໃບຢັ້ງຢືນເຕັກນິກ
7. ສຳເນົາໃບປະກາດຖຸນນະວຸດທິດ້ານໄອທີ 1 ສະບັບ
8. ສຳເນົາໜັງສືຜ່ານແດນ ກໍລະນີປະກອບຂໍໃບອະນຸຍາດອິນເຕີເນັດກາເຟ ປະເພດ 2.

**ມາດຕາ 8 ອາຍຸໃບອະນຸຍາດ.**

ໃບອະນຸຍາດດຳເນີນທຸລະກິດໃຫ້ບໍລິການອິນເຕີເນັດກາເຟ ມີກຳນົດນຳໃຊ້ ໜຶ່ງປີ ນັບແຕ່ ວັນທີ ອອກ ໃບອະນຸຍາດ ເປັນຕົ້ນໄປ.

**ມາດຕາ 9 ການຕໍ່ໃບອະນຸຍາດ.**

ການສະເໜີຂໍຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດໃຫ້ບໍລິການອິນເຕີເນັດກາເຟ ຕ້ອງຍື່ນຄຳຮ້ອງຂໍຕໍ່ ອາຍຸໃບອະນຸຍາດ ກ່ອນວັນໝົດອາຍຸຢ່າງໜ້ອຍ ສາມສິບ ວັນ ແລະ ປະກອບເອກະສານຕາມທີ່ກຳນົດດັ່ງນີ້:

1. ໃບຄຳຮ້ອງ
2. ໃບອະນຸຍາດສະບັບເກົ່າ
3. ໃບທະບຽນວິສາຫະກິດ (ຖ້າວິສາຫະກິດມີການປ່ຽນແປງ)
4. ສຳເນົາສຳມະໂນຄົວ ຫຼື ບັດປະຈຳຕົວ 1 ສະບັບ (ຖ້າມີການປ່ຽນແປງ)
5. ໃບຢັ້ງຢືນທີ່ຢູ່ຈາກອຳນາດການປົກຄອງບ້ານ 1 ສະບັບ (ຖ້າມີການປ່ຽນແປງ)
6. ໃບຢັ້ງຢືນທີ່ຕັ້ງຂອງຮ້ານ 1 ສະບັບ (ຖ້າມີການປ່ຽນແປງ)
7. ໃບຢັ້ງຢືນເຕັກນິກ (ຖ້າມີການປ່ຽນແປງ)
8. ສຳເນົາໃບປະກາດຄຸນນະວຸດທິດ້ານໄອທີ 1 ສະບັບ (ຖ້າມີການປ່ຽນແປງ)
9. ສຳເນົາໜັງສືຜ່ານແດນ ກໍລະນີປະກອບຂໍໃບອະນຸຍາດອິນເຕີເນັດກາເຟ ປະເພດ 2. (ຖ້າມີການ ປ່ຽນແປງ)

**ມາດຕາ 10 ການປ່ຽນແປງ, ໂຈະ ຫຼື ຍຸບເລີກ ໃບອະນຸຍາດ.**

ຜູ້ໃຫ້ບໍລິການອິນເຕີເນັດກາເຟ ທີ່ມີຈຸດປະສົງຂໍປ່ຽນແປງເນື້ອໃນໃບອະນຸຍາດ, ໂຈະ ຫຼື ຍຸບເລີກ ການໃຫ້ບໍລິການອິນເຕີເນັດກາເຟ ຕ້ອງປະກອບເອກະສານ ຕາມທີ່ກຳນົດໄວ້ດັ່ງນີ້:

1. ໃບຄຳຮ້ອງ
2. ໃບອະນຸຍາດສະບັບເກົ່າ
3. ໃບທະບຽນວິສາຫະກິດ (ຖ້າວິສາຫະກິດມີການປ່ຽນແປງ)
4. ສຳເນົາສຳມະໂນຄົວ ຫຼື ບັດປະຈຳຕົວ 1 ສະບັບ (ຖ້າມີການປ່ຽນແປງ)
5. ໃບຢັ້ງຢືນທີ່ຢູ່ຈາກອຳນາດການປົກຄອງບ້ານ 1 ສະບັບ (ຖ້າມີການປ່ຽນແປງ)
6. ໃບຢັ້ງຢືນທີ່ຕັ້ງຂອງຮ້ານ 1 ສະບັບ (ຖ້າມີການປ່ຽນແປງ)
7. ໃບຢັ້ງຢືນເຕັກນິກ (ຖ້າມີການປ່ຽນແປງ)
8. ສຳເນົາໃບປະກາດຄຸນນະວຸດທິດ້ານໄອທີ 1 ສະບັບ (ຖ້າມີການປ່ຽນແປງ)
9. ສຳເນົາໜັງສືຜ່ານແດນ ກໍລະນີປະກອບຂໍໃບອະນຸຍາດອິນເຕີເນັດກາເຟ ປະເພດ 2. (ຖ້າມີການ ປ່ຽນແປງ)

**ມາດຕາ 11 ການພິຈາລະນາອອກໃບອະນຸຍາດ**

ການພິຈາລະນາອອກໃບອະນຸຍາດໃຫ້ການບໍລິການອິນເຕີເນັດກາເຟ ຕ້ອງສຳເລັດ ພາຍໃນກຳນົດເວ ລາ ສິບ ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບຄຳຮ້ອງເປັນຕົ້ນໄປ.

ໃນກໍລະນີ ເອກະສານບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ຫຼື ບໍ່ມີເງື່ອນໄຂໄດ້ຮັບອະນຸຍາດ, ຕ້ອງແຈ້ງໃຫ້ຜູ້ ຂໍອະນຸຍາດຊາບ ພາຍໃນກຳນົດເວລາ ຫ້າ ວັນ ລັດຖະການ.

**ມາດຕາ 12 ເງື່ອນໄຂ ດຳເນີນກິດຈະການໃຫ້ບໍລິການອິນເຕີເນັດກາເຟ**

ຜູ້ຂໍອະນຸຍາດໃຫ້ບໍລິການອິນເຕີເນັດກາເຟ ຕ້ອງມີ ເງື່ອນໄຂ ດັ່ງນີ້:

1. ຕ້ອງມີສະຖານທີ່ເໝາະສົມ ໂດຍມີເນື້ອທີ່ 2ມ$^2$ ຕໍ່ຄອມພິວເຕີ 01 ໜ່ວຍ, ມີພື້ນທີ່ຮ້ານບໍ່ຕໍ່າກວ່າ 8ມ$^2$, ມີແສງສະຫວ່າງພຽງພໍ ແລະ ມີອາກາດຖ່າຍເທສະດວກ (ສໍາລັບປະເພດທີ 1);
2. ຕ້ອງຮັບປະກັນຄວາມປອດໄພ ແກ່ຜູ້ໃຊ້ບໍລິການ ເປັນຕົ້ນ ລະບົບປ້ອງກັນອັກຄີໄພ, ກັນໄຟຟ້າລັດວົງຈອນ, ເຕັກນິກ ຖືກຕ້ອງຕາມມາດຕະຖານ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ;
3. ຕ້ອງມີລະບົບກ້ອງວົງຈອນປິດ ທີ່ສາມາດບັນທຶກການເຄື່ອນໄຫວຂອງຜູ້ໃຊ້ບໍລິການຢູ່ຮ້ານ ຫຼື ສະ ຖານທີ່ໃຫ້ບໍລິການອິນເຕີເນັດກາເຟ ເປັນເວລາບໍ່ຕໍ່າກ່ວາ ສາມສິບ ວັນ;
4. ຕ້ອງສະແດງໃບອະນຸຍາດດຳເນີນທຸລະກິດ, ອັດຕາຄ່າບໍລິການ ແລະ ລະບຽບການຕ່າງໆພາຍໃນຮ້ານ ໃຫ້ຜູ້ໃຊ້ບໍລິການ ສາມາດເຫັນ ແລະ ອ່ານໄດ້ງ່າຍ;
5. ຕ້ອງມີລະບົບເຄືອຂ່າຍຄອມພິວເຕີ ທີ່ມີສັນຍານອິນເຕີເນັດ ພາຍໃນຂອບເຂດຮ້ານ ຫຼື ສະຖານທີ່ ທີ່ຢູ່ໃນ ຄວາມຮັບຜິດຊອບ ຂອງຕົນເທົ່ານັ້ນ;
6. ຕ້ອງມີໂປຣແກຣມປ້ອງກັນໄວຣັດ ພາຍໃນຄອມພິວເຕີ;
7. ຕ້ອງມີຄວາມໄວອິນເຕີເນັດ ຢ່າງໜ້ອຍ 2 Mbps ຂຶ້ນໄປ;
8. ລະບົບເຄືອຂ່າຍຄອມພິວເຕີແບບບໍ່ມີສາຍ ແມ່ນອະນຸຍາດສະເພາະລະບົບ WiFi ທີ່ຍ່ານຄວາມຖີ່ 2.4GHz ຫຼື 5GHz ເທົ່ານັ້ນ ແລະ ຄວາມແຮງສົ່ງອອກ ຕ້ອງບໍ່ເກີນ 0.05 watt.

**ມາດຕາ 13 ການປະຕິບັດເງື່ອນໄຂດຳເນີນກິດຈະການ**

ຜູ້ໄດ້ຮັບອະນຸຍາດ ຕ້ອງຈັດຕັ້ງປະຕິບັດເງື່ອນໄຂດຳເນີນກິດຈະການ ຕາມທີ່ໄດ້ລະບຸໄວ້ ໃນມາດຕາ 12 ພາຍໃນກຳນົດເວລາ ຫົກສິບ ວັນ ນັບແຕ່ມື້ໄດ້ຮັບອະນຸຍາດເປັນຕົ້ນໄປ.

## ໝວດທີ 3

## ການຄຸ້ມຄອງ ແລະ ກວດກາ ການໃຫ້ບໍລິການອິນເຕີເນັດກາເຟ

**ມາດຕາ 14 ອົງການຄຸ້ມຄອງ ແລະ ກວດກາ ການໃຫ້ບໍລິການອິນເຕີເນັດກາເຟ**

ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫຼວງ ເປັນຜູ້ຄຸ້ມຄອງ ແລະ ຕິດຕາມກວດກາ ການໃຫ້ບໍລິການອິນເຕີເນັດກາເຟ ຕາມສິດ ແລະ ໜ້າທີ່ຂອງຕົນ ທີ່ລະບຸໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 15 ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງ ແລະ ກວດກາ ການໃຫ້ບໍລິການອິນເຕີເນັດກາເຟ**

ໃນການຄຸ້ມຄອງການໃຫ້ບໍລິການອິນເຕີເນັດກາເຟ ພະແນກໄປສະນີ,. ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫຼວງ ມີໜ້າທີ່ ດັ່ງນີ້:

1. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ກ່ຽວກັບການໃຫ້ບໍລິການອິນເຕີເນັດກາເຟ ເປັນຕົ້ນ: ຄຸນນະພາບ ການບໍລິການ, ມາດຕະຖານເຕັກນິກ ແລະ ຄ່າບໍລິການ ຕ່າງໆ;
2. ເກັບກຳຂໍ້ມູນສະຖິຕິ ຜູ້ໃຊ້ບໍລິການ ແລະ ຜູ້ໃຫ້ບໍລິການອິນເຕີເນັດກາເຟ;
3. ສະຫຼຸບ ລາຍງານ ການຈັດຕັ້ງປະຕິບັດວຽກງານໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
4. ອອກອະນຸຍາດ, ຕໍ່ ແລະ ປ່ຽນແປງໃບອະນຸຍາດດຳເນີນທຸລະກິດໃຫ້ບໍລິການອິນເຕີເນັດກາເຟ;
5. ກ່າວເຕືອນ, ສຶກສາອົບຮົມ ຫຼື ປັບໃໝ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;

6. ເກັບຄ່າທຳນຽມ ແລະ ຄ່າບໍລິການ ອະນຸຍາດດຳເນີນທຸລະກິດໃຫ້ບໍລິການອິນເຕີເນັດກາເຟ;
7. ກຳນົດໂມງເວລາໃຫ້ບໍລິການ ຕາມລະບຽບການ ແລະ ສະພາບຄວາມເປັນຈິງ ຂອງທ້ອງຖິ່ນ;
8. ຕິດຕາມ ແລະ ກວດກາ ການປະຕິບັດເງື່ອນໄຂ, ມາດຖານ ແລະ ລະບຽບການ ຕາມຂໍ້ຕົກລົງສະບັບນີ້;
9. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ໃນການຄຸ້ມຄອງການໃຫ້ບໍລິການອິນເຕີເນັດກາເຟ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫຼວງ ມີສິດ ດັ່ງນີ້:

1. ໂຈະ ແລະ ຖອນ ໃບອະນຸຍາດດຳເນີນທຸລະກິດໃຫ້ບໍລິການອິນເຕີເນັດກາເຟ;
2. ຊີ້ນຳ ການຈັດຕັ້ງປະຕິບັດໃນການຄຸ້ມຄອງການໃຫ້ບໍລິການອິນເຕີເນັດກາເຟ ຕໍ່ຂັ້ນລຸ່ມ;
3. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 16 ສິດ ແລະ ພັນທະ ຂອງຜູ້ໃຫ້ບໍລິການ ອິນເຕີເນັດກາເຟ**

ຜູ້ໃຫ້ບໍລິການ ອິນເຕີເນັດກາເຟ ມີພັນທະ ດັ່ງນີ້:

1. ຢູ່ພາຍໃຕ້ການຄຸ້ມຄອງ ແລະ ກວດກາ ຂອງຂະແໜງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ທາງດ້ານວິຊາການ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;
2. ຂຶ້ນທະບຽນ ແລະ ຕໍ່ອະນຸຍາດດຳເນີນທຸລະກິດ ຂອງຕົນນຳຂະແໜງການທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ ຕາມລະບຽບກົດໝາຍ;
3. ລາຍງານກ່ຽວກັບການໃຫ້ບໍລິການອິນເຕີເນັດກາເຟຂອງຕົນ ຕາມການກຳນົດ ຂອງຂະແໜງໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ຢ່າງເປັນປົກກະຕິ;
4. ມອບພັນທະໃຫ້ລັດຕາມລະບຽບກົດໝາຍ;
5. ປະຕິບັດພັນທະອື່ນ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

ຜູ້ໃຫ້ບໍລິການ ອິນເຕີເນັດກາເຟ ມີສິດ ດັ່ງນີ້:

1. ເກັບຄ່າບໍລິການ ຕາມອັດຕາຄ່າບໍລິການທີ່ໄດ້ສະແດງພາຍໃນຮ້ານ;
2. ທວງຖາມ ແລະ ຮ້ອງຟ້ອງ ຕໍ່ພະນັກງານຄຸ້ມຄອງ ທີ່ມີພຶດຕິກຳບໍ່ເໝາະສົມ ເພື່ອໃຫ້ຄວາມເປັນທຳ ແກ່ຜູ້ໃຫ້ບໍລິການອິນເຕີເນັດກາເຟ ຕາມຂັ້ນຕອນ ຂອງຂະບວນການຍຸດຕິທຳ;
3. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 17 ສິດ ແລະ ພັນທະ ຂອງຜູ້ໃຊ້ບໍລິການ ອິນເຕີເນັດກາເຟ**

ຜູ້ໃຊ້ບໍລິການ ອິນເຕີເນັດກາເຟ ມີພັນທະ ດັ່ງນີ້:

1. ຈ່າຍຄ່າບໍລິການ ຕາມລະບຽບການ;
2. ຮັບຜິດຊອບຕໍ່ຂໍ້ມູນ ຂ່າວສານ ຂອງຕົນທີ່ສົ່ງ ແລະ ຮັບ ຊຶ່ງອາດເປັນຜົນກະທົບຕໍ່ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ສັງຄົມ ທີ່ເປັນການລະເມີດ ຕໍ່ລະບຽບກົດໝາຍ;
3. ປະຕິບັດພັນທະອື່ນ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

ຜູ້ໃຊ້ບໍລິການ ອິນເຕີເນັດກາເຟ ມີສິດ ດັ່ງນີ້:

1. ໄດ້ຮັບການບໍລິການທີ່ມີຄຸນນະພາບ ສະດວກ, ວ່ອງໄວ ແລະ ປອດໄພ;
2. ທວງຖາມ ແລະ ຮ້ອງຟ້ອງ ຜູ້ໃຫ້ບໍລິການອິນເຕີເນັດກາເຟ ຕາມຂັ້ນຕອນຂອງຂະບວນການຍຸຕິທຳ ເພື່ອຂໍຄວາມເປັນທຳ;
3. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 4
## ຄ່າທຳນຽມ ແລະ ຄ່າບໍລິການ

### ມາດຕາ 18 ຄ່າທຳນຽມ ແລະ ຄ່າບໍລິການ

ຄ່າທຳນຽມ ແລະ ຄ່າບໍລິການ ອອກອະນຸຍາດໃຫ້ບໍລິການອິນເຕີເນັດກາເຟ ແຕ່ລະປະເພດ ຣແມ່ນໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດ ຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

## ໝວດທີ 5
## ຂໍ້ຫ້າມ

### ມາດຕາ 19 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ໃຫ້ບໍລິການອິນເຕີເນັດກາເຟ ໂດຍບໍ່ໄດ້ຮັບອະນຸຍາດ;
2. ດັດແກ້, ປອມແປງ ແລະ ໃຫ້ຜູ້ອື່ນຢືມ ຫຼື ເຊົ່າ ໃບອະນຸຍາດ ບໍລິການອິນເຕີເນັດກາເຟ;
3. ເຊື່ອມຕໍ່ ອິນເຕີເນັດ ໂດຍກົງກັບຕ່າງປະເທດ;
4. ນຳໃຊ້ຮ້ານ ຫຼື ສະຖານທີ່ໃຫ້ບໍລິການອິນເຕີເນັດ ເປັນບ່ອນມົ້ວສຸມທາງສັງຄົມ ເປັນຕົ້ນ ການພະນັນ, ຢາເສບຕິດ ແລະ ອື່ນໆ ທີ່ຜິດຕໍ່ລະບຽບກົດໝາຍ;
5. ນຳໃຊ້ອິນເຕີເນັດກາເຟ ເປັນບ່ອນຫຼິ້ນເກມທຸກປະເພດ;
6. ນຳໃຊ້ລະບົບຄອມພິວເຕີ ເປັນເຄື່ອງມືເຜີຍແຜ່ ຫຼື ກະຈາຍຂ່າວປັ່ນປ່ວນສັງຄົມ, ຕົວະຍົວະຫຼອກລວງ, ໃສ່ຮ້າຍປ້າຍສີ, ຂ່າວລາມົກອານາຈານ, ຂ່າວບິດເບືອນ ແລະ ອື່ນໆ;
7. ນຳໃຊ້ອິນເຕີເນັດກາເຟ ເປັນບ່ອນປ່ອຍໄວຣັດຄອມພິວເຕີ, ໂຈລະກຳຂໍ້ມູນ ຫຼື ທຳລາຍ ຂໍ້ມູນຂອງບຸກຄົນ ຫຼື ນິຕິບຸກຄົນອື່ນ;
8. ມີພຶດຕິກຳອື່ນທີ່ລະເມີດຕໍ່ລະບຽບກົດໝາຍ.

### ມາດຕາ 20 ຂໍ້ຫ້າມສຳລັບພະນັກງານຄຸ້ມຄອງ ການໃຫ້ບໍລິການອິນເຕີເນັດກາເຟ

ຫ້າມພະນັກງານຄຸ້ມຄອງ ການໃຫ້ບໍລິການອິນເຕີເນັດກາເຟມີພຶດຕິກຳ ດັ່ງນີ້:

1. ໃຫ້ບໍລິການອິນເຕີເນັດກາເຟ;
2. ກົດໜ່ວງ, ຖ່ວງດຶງ ແລະ ປອມແປງເອກະສານ ກ່ຽວກັບການໃຫ້ບໍລິການອິນເຕີເນັດກາເຟ;
3. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ ນຳຜູ້ໃຫ້ບໍລິການອິນເຕີເນັດກາເຟ;
4. ມີພຶດຕິກຳອື່ນທີ່ລະເມີດຕໍ່ລະບຽບກົດໝາຍ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 21 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ໄດ້ຮັບນະໂຍບາຍອື່ນ ຕາມລະບຽບການ.

ມາດຕາ 22 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໄໝ, ໂຈະ ຫຼື ຖອນໃບອະນຸຍາດດໍາເນີນທຸລະກິດ ຫຼື ລົງໂທດ ທາງແພ່ງ ຫຼື ທາງອາຍາ ຕາມແຕ່ກໍລະນີ ເບົາ ຫຼື ໜັກ ລວມທັງໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

ມາດຕາ 23 ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ ໃນກໍລະນີ ດັ່ງນີ້:

1. ພະນັກງານຂອງລັດທີ່ເຮັດວຽກຄຸ້ມຄອງທຸລະກິດໃຫ້ບໍລິການອິນເຕີເນັດກາເຟ ບໍ່ໃຫ້ຄວາມສະດວກ, ຊັກຊ້າ, ກົດໜ່ວງຖ່ວງດຶງການພິຈາລະນາຄໍາຮ້ອງຂໍອະນຸຍາດ ໂດຍບໍ່ມີເຫດຜົນ, ໃຊ້ມາລະຍາດ ແລະ ຄໍາເວົ້າທີ່ບໍ່ເໝາະສົມ;
2. ຜູ້ໃຫ້ບໍລິການອິນເຕີເນັດກາເຟ ບໍ່ໃຫ້ຄວາມສະດວກແກ່ຜູ້ຊົມໃຊ້ ຫຼື ລະເມີດຂໍ້ຫ້າມ ໃນສະຖານເບົາ.

ມາດຕາ 24 ມາດຕະການທາງວິໄນ

ພະນັກງານຄຸ້ມຄອງ ທຸລະກິດປະກອບການໃຫ້ບໍລິການອິນເຕີເນັດກາເຟ ທີ່ລະເມີດຂໍ້ຫ້າມ ໃນຂໍ້ຕົກລົງສະບັບນີ້ ທີ່ບໍ່ເປັນການກະທໍາຜິດທາງອາຍາ ແລະ ກໍ່ຄວາມເສັຽຫາຍເລັກນ້ອຍຈະຖືກລົງວິໄນຕາມແຕ່ລະກໍລະນີ ດັ່ງນີ້:

1. ຕໍານິ ຫຼື ກ່າວເຕືອນ ພ້ອມທັງບັນທຶກໄວ້ໃນສໍານວນເອກະສານຊີວະປະຫວັດ ຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
3. ປົດຕໍາແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕໍາແໜ່ງຕໍ່າກວ່າເກົ່າ;
4. ໃຫ້ອອກຈາກລັດຖະກອນ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ຜູ້ຖືກລົງວິໄນ ຕ້ອງສົ່ງຊັບສິນ ທີ່ຕົນໄດ້ມາຢ່າງບໍ່ຖືກຕ້ອງນັ້ນ ຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

ມາດຕາ 25 ມາດຕະການປັບໄໝ

ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໄໝ ດັ່ງນີ້:

1. ໃຫ້ບໍລິການໂດຍບໍ່ໄດ້ຮັບອະນຸຍາດ ປັບໄໝ 5,000,000 ກີບ;
2. ໃຫ້ບໍລິການບໍ່ສອດຄ່ອງກັບໃບອະນຸຍາດ ປັບໄໝ 3,000,000 ກີບ;
3. ເອົາໃບອະນຸຍາດດໍາເນີນທຸລະກິດໃຫ້ບໍລິການອິນເຕີເນັດກາເຟ ໃຫ້ຜູ້ອື່ນນໍາໃຊ້, ເຊົ່າ ຫຼື ໂອນ ໂດຍບໍ່ໄດ້ຮັບ ອະນຸຍາດ ປັບໄໝ 2,000,000 ກີບ;
4. ເຊື່ອມຕໍ່ອິນເຕີເນັດ ໂດຍກົງກັບຕ່າງປະເທດ ປັບໄໝ 10,000,000 ກີບ;
5. ຕໍ່ອາຍຸໃບອະນຸຍາດ ຊ້າກ່ອນກໍານົດ ເກີນກວ່າ ສາມສິບວັນ ປັບໄໝ 500,000 ກີບ;
6. ເຄີຍຖືກປັບໄໝມາແລ້ວ ແຕ່ຍັງສືບຕໍ່ລະເມີດ ຈະຖືກປັບໄໝ 2 ເທົ່າ.

ມາດຕາ 26 ມາດຕະການໂຈະ ຫຼື ຍຸບເລີກ

ຜູ້ໃຫ້ບໍລິການອິນເຕີເນັດກາເຟ ຈະຖືກໂຈະ ຫຼື ຍຸບເລີກ ໃນກໍລະນີ ດັ່ງນີ້:

1. ດໍາເນີນທຸລະກິດ ບໍ່ສອດຄ່ອງກັບເງື່ອນໄຂ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 12 ຂອງຂໍ້ຕົກລົງສະບັບນີ້;
2. ລະເມີດຂໍ້ຫ້າມ ຫຼື ພັນທະ ໃນຂໍ້ຕົກລົງສະບັບນີ້;
3. ກະທໍາຜິດຕໍ່ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 27 ການຈັດຕັ້ງປະຕິບັດ**

ມອບໃຫ້ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫຼວງ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 28 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ໄດ້ລົງລາຍເຊັນ ແລະ ພາຍຫຼັງທີ່ໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ກຳນົດ ສະບັບເລກທີ 579/ສນຍ.ອປທ, ລົງວັນທີ 10/06/2009.

**ລັດຖະມົນຕີວ່າການ**

ຫຽມ ພົມມະຈັນ